ມາດຕະຖານແຫ່ງຊາດ ສໍາລັບການແກ້ໄຂບັນຫາລະເບີດບໍ່ທັນແຕກ
ທີ່ຕົກຄ້າງຢູ່ ສປປ ລາວ

# ບົດທີ 1

# ໂຄງຮ່າງການຈັດຕັ້ງຂອງຂະແໜງການ,ການຈັດຕັ້ງ ແລະ ຄວາມຮັບຜິດຊອບ

ຄະນະກໍາມະການຄຸ້ມຄອງແຫ່ງຊາດ (ຄຊກລ) ກ່ຽວກັບ
ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

15 ຕຸລາ 212

# ສາລະບານ

ສາລະບານ ........................................................................................................................2

ບັນທຶກການດັດແກ້ ..............................................................................................................3

1. ຄຳນຳ ...........................................................................................................................4

2. ຂອບເຂດ.......................................................................................................................4

3. ຂໍ້ກຳນົດດ້ານກົດໝາຍ ກ່ຽວກັບ ການປະຕິບັດງານດ້ານລະເບີດບໍ່ທັນແຕກ..................................4

3.1. ດຳລັດນາຍົກລັດຖະມົນຕີ ເລກທີ 75 ລົງວັນທີ 5 ມິຖຸນາ 2000 .................................................4

3.2. ດຳລັດນາຍົກລັດຖະມົນຕີ ເລກທີ 406/ນຍ ລົງວັນທີ 08 ພະຈິກ 2011 .......................................4

3.3. ແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ ເລກທີ 01/ລບ ລົງວັນທີ 22 ມິຖຸນາ 2012 ..........................................................................................................4

3.4. ຂໍ້ຕົກລົງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄຊກລ, ສະບັບລົງວັນທີ 12 ທັນວາ 2005 ...5

3.5. ຂໍ້ຕົກລົງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄຊກລ, ສະບັບລົງວັນທີ 12 ທັນວາ 2005 ...5

4. ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ (ຄຊກລ)........5

5. ຄະນະກຳມະການ ຄຊກລ ...................................................................................................5

5.1. ສະມາຊິກຂອງຄະນະກຳມະການ ຄຊກລ .................................................................................6

5.2. ຄວາມຮັບຜິດຊອບຂອງຄະນະກຳມະການ ຄຊກລ ...................................................................6

5.3. ການປະຊຸມ .....................................................................................................................7

5.4. ການອະນຸມັດອົງການປະຕິບັດງານ ແລະ ກິດຈະກຳ ກ່ຽວກັບລະເບີດບໍ່ທັນແຕກ ............................8

5.5. ການບໍລິຫານຄຸ້ມຄອງຊັບສິນຕ່າງໆ .......................................................................................8

6. ຫ້ອງການ ຄຊກລ ຂັ້ນສູນກາງ ................................................................................................8

6.1. ຄວາມຮັບຜິດຊອບລວມ ຂອງ ຫ້ອງການ ຄຊກລ ຂັ້ນສູນກາງ......................................................9

6.2. ຄວາມຮັບຜິດຊອບຂອງພະແນກນະໂຍບາຍ, ບໍລິຫານ ແລະ ມາດຕະຖານ ................................10

6.3. ຄວາມຮັບຜິດຊອບຂອງພະແນກປະຕິບັດງານ .....................................................................10

7. ຫ້ອງການປະສານງານ ຄຊກລ ປະຈຳແຂວງ .........................................................................11

8. ຫ້ອງການປະງານ ຄຊກລ ຂັ້ນທ້ອງຖິ່ນ (ແຂວງ ແລະ ເມືອງ ....................................................11

9. ຄວມຮັບຜິດຊອບລວມຂອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ....................................12

ເອກກະສານຊ້ອນທ້າຍ ກ ໂຄງຮ່າງການຈັດຕັ້ງຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ ...................................................................................................13

# ບັນທຶກການດັດແກ້

## ການຄຸ້ມຄອງການດັດແກ້ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດແຫ່ງ ສປປ ລາວ

ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຈະມີການທົບທວນຄືນເປັນທາງການ 3 ປີຕໍ່ຄັ້ງ. ຖ້າຫາກມີຄວາມຈໍາເປັນກໍ່ສາມາດທົບທວນກ່ອນກໍານົດໄດ້ ເປັນຕົ້ນແມ່ນບັນຫາກ່ຽວກັບຄວາມປອດໄພ ແລະ ປະສິດທິພາບຂອງການປະຕິບັດງານ ຫຼື ສໍາລັບຈຸດປະສົງເພື່ອດັດແກ້ໃຫ້ແທດເໝາະກັບສະພາບການຕົວຈິງໃນປະຈຸບັນ. ຖ້າມີການດັດແກ້ແມ່ນໃຫ້ໃສ່ເລກທີ, ວັນທີ ແລະ ລາຍລະອຽດຂອງການດັດແກ້ໃສ່ໃນຕາຕະລາງທີ່ກໍານົດຢູ່ລຸ່ມນີ້.

ເມື່ອສໍາເລັດການທົບທວນມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຢ່າງເປັນທາງການແລ້ວ ກໍ່ຈະໄດ້ເຜີຍແຜ່ໃຫ້ນໍາໃຊ້. ຂໍ້ດັດແກ້ຕ່າງໆທີ່ມີຢູ່ໃນສະບັບດັດແກ້ກ່ອນໜ້ານັ້ນ ຈະຕ້ອງໄດ້ລວມເຂົ້າໄວ້ໃນສະບັບດັດແກ້ໃໝ່ເລີຍ ແລະ ໃຫ້ລືບອອກຈາກຕາຕະລາງບັນທຶກການດັດແກ້. ຈາກນັ້ນ ກໍໃຫ້ເລີ່ມຕັ້ງຕົ້ນບັນທຶກການດັດແກ້ໃໝ່ຈົນກວ່າຈະມີການທົບທວນຄືນໃນຄັ້ງຕໍ່ໄປອີກ.

| ເລກທີ | ວັນທີ | ລາຍລະອຽດການດັດແກ້ |
|---|---|---|
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |

## 1. ຄຳນຳ

ທຸກອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ທີ່ປະຕິບັດງານຢູ່ ສປປ ລາວ ຄວນມີຄວາມເຂົ້າໃຈຕໍ່ໂຄງຮ່າງການຈັດຕັ້ງຂອງຂະແໜງການທີ່ຕົນກຳລັງປະຕິບັດງານຢູ່, ຮູ້ຈັກການຈັດຕັ້ງ ແລະ ຄວາມຮັບຜິດຊອບ ຂອງ ຄຊກລ ແລະ ຄວາມຮັບຜິດຊອບລວມຂອງຕົນເອງ.

ຄຊກລ ໃນຖານະທີ່ເປັນອົງການຄຸ້ມຄອງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຢູ່ ສປປ ລາວ ມີຄວາມຮັບຜິດຊອບ ຮັບປະກັນໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ເຂົ້າເຖິງຂໍ້ມູນຂ່າວສານ ແລະ ປະຕິບັດໃຫ້ຖືກຕ້ອງກັບຄວາມຮັບຜິດຊອບລວມຂອງຕົນ.

## 2. ຂອບເຂດ

ມາດຕະຖານແຫ່ງຊາດບົດນີ້ ໃຫ້ລາຍລະອຽດກ່ຽວກັບ ໂຄງຮ່າງການຈັດຕັ້ງ ແລະ ຄວາມຮັບຜິດຊອບຂອງຂະແໜງກິດຈະການດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ.

## 3. ຂໍ້ກຳນົດດ້ານກົດໝາຍ ກ່ຽວກັບ ການປະຕິບັດງານດ້ານລະເບີດບໍ່ທັນແຕກ

ປະຈຸບັນ ສປປ ລາວ ຍັງບໍ່ມີກົດໝາຍຄຸ້ມຄອງ ຂະແໜງກິດຈະການດ້ານລະເບີດບໍ່ທັນແຕກເທື່ອ. ແຕ່ວ່າ ມີເອກະສານທາງການຈຳນວນໜຶ່ງ (ດຳລັດ, ມະຕິຕົກລົງ ແລະ ຂໍ້ກຳນົດຕ່າງໆ) ທີ່ປະຕິບັດໜ້າທີ່ຄຸ້ມຄອງການປະຕິບັດງານ ດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ. ເອກະສານເຫຼົ່ານີ້ຈະໄດ້ກ່າວເຖິງໃນຫົວຂໍ້ລຸ່ມນີ້

### 3.1. ດຳລັດນາຍົກລັດຖະມົນຕີ ເລກທີ 75 ລົງວັນທີ 5 ມິຖຸນາ 2000

"ດຳລັດນາຍົກລັດຖະມົນຕີ ເລກທີ 75 ລົງວັນທີ 5 ມິຖຸນາ 2000" ໄດ້ກຳນົດໃຫ້ມີການສ້າງຕັ້ງ ຄະນະກຳມະການປະຈຳຂອງລັດຖະບານແຫ່ງ ສປປ ລາວ ສຳລັບກອງທຶນພິເສດ ເພື່ອການເກັບກູ້ລະເບີດບໍ່ທັນແຕກໃນ ສປປ ລາວ. ດຳລັດສະບັບນີ້ ໄດ້ມອບໝາຍໃຫ້ສະມາຊິກຂອງຄະນະກຳມະການປະຈຳຝ່າຍລັດຖະບານ ເພື່ອຮ່າງພາລະບົດບາດ, ສິດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຄະນະກຳມະການດັ່ງກ່າວ.

### 3.2. ດຳລັດນາຍົກລັດຖະມົນຕີ ເລກທີ 406/ນຍ ລົງວັນທີ 08 ພະຈິກ 2011

ດຳລັດນາຍົກລັດຖະມົນຕີ ເລກທີ 406/ນຍ ລົງວັນທີ 08 ພະຈິກ 2011 ລາຍລະອຽດໂຄງປະກອບການຈັດຕັ້ງ ແລະ ໜ້າທີ່ ພາລະບົດບາດ ຂອງ ຄຊກລ ທີ່ໄດ້ປ່ຽນແທນຈາກສອງ ດຳລັດຂ້າງລຸ່ມນີ້.

ກ. ດຳລັດນາຍົກລັດຖະມົນຕີ ເລກທີ 164/ນຍ ລົງວັນທີ 09 ມິຖຸນາ 2011

ຂ. ດຳລັດນາຍົກລັດຖະມົນຕີ ເລກທີ 33/ນຍ ລົງວັນທີ 07 ພຶດສະພາ 2004 ວ່າດ້ວຍ ການສ້າງຕັ້ງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງຢູ່ ສປປ ລາວ (ຄຊກລ). ດຳລັດສະບັບນີ້ໄດ້ສ້າງຕັ້ງກຳມະການ ຄຊກລ ຢ່າງເປັນທາງການ.

### 3.3. ແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ການແກ້ໄຂບັນຫາລະເບີດບໍ່ທັນແຕກຢູ່ ສປປ ລາວ ເລກທີ 01/ລບ ລົງວັນທີ 22 ມິຖຸນາ 2012

"ມະຕິຕົກລົງຂອງລັດຖະບານແຫ່ງ ສປປ ລາວ ວ່າດ້ວຍ ແຜນຍຸດທະສາດແຫ່ງຊາດ ກ່ຽວກັບ ການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ ໃນ ສປປ ລາວ (2003-2013)" ໄດ້ກຳນົດແຜນຍຸດທະສາດແຫ່ງຊາດ ຂອງລັດຖະບານແຫ່ງ ສປປ ລາວ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ສຳລັບປີ 2011 ຈົນເຖິງທ້າຍ ປີ 2020.

ເອກະສານດັ່ງກ່າວ ໄດ້ກຳນົດໂຄງຮ່າງວຽກງານ ໃນການສ້າງຕັ້ງ ຄຊກລ, ກຳນົດຂອບເຂດຄວາມຮັບຜິດຊອບ ຂອງ ອົງການປະຕິບັດງານດ້ານລະເບີດ ແລະ ກຳນົດບຸລິມະສິດ ສຳລັບການເກັບກູ້ລະເບີດບໍ່ທັນແຕກໃນ ສປປ ລາວ. ເນື້ອໃນສ່ວນຫຼາຍຂອງເອກະສານ ແມ່ນເລັງໃສ່ການປະຕິບັດງານຂອງໂຄງການເກັບກູ້ລະເບີດແຫ່ງຊາດ ລາວ (ຄກລ) ພ້ອມດ້ວຍລາຍລະອຽດການຈັດສັນໜ່ວຍປະຕິບັດງານຂອງ ຄກລ ປະຈຳແຕ່ລະແຂວງ, ຄາດຄະເນ ຜົນ ສຳເລັດທີ່ຈະໄດ້ຮັບໃນລະຫວ່າງການປະຕິບັດແຜນການ (ເຖິງປີ 2013) ແລະ ຄວາມຕ້ອງການ ດ້ານງົບປະ ມານຂອງໂຄງການເກັບກູ້ລະເບີດແຫ່ງຊາດລາວ ແລະ ຄຊກລ ໃນແຕ່ລະປີ.

ປະຈຸບັນນີ້ ແຜນຍຸດທະສາດຂອງຂະແໜງກິດຈະການດ້ານລະເບີດບໍ່ທັນແຕກ ກຳລັງຢູ່ໃນຂັ້ນຕອນການທົບທວນ ຄືນ ແລະ ຈະຖືກປ່ຽນແທນໂດຍແຜນຍຸດທະສາດສະບັບທີ່ຜ່ານຂະບວນການຄົ້ນຄວ້າທົບທວນຄືນໃໝ່ ໃນອະນາ ຄົດອັນໃກ້ນີ້.

### 3.4. ຂໍ້ຕົກລົງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄຊກລ, ສະບັບລົງວັນທີ 12 ທັນວາ 2005

**"ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄຊກລ ຢູ່ ສປປ ລາວ"** ໄດ້ກຳນົດພາລະບົດບາດ, ຄວາມຮັບຜິດຊອບ, ໜ້າທີ່ລວມ ແລະ ໂຄງປະກອບການຈັດຕັ້ງ ຂອງ ຄຊກລ ໃນການຄຸ້ມຄອງບັນດາອົງການປະ ຕິບັດງານດ້ານລະເບີດ ແລະ ການນຳໃຊ້ທຶນຮອນ ເຂົ້າໃນຂະແໜງກິດຈະການດ້ານລະເບີດບໍ່ທັນແຕກໃນ ສປປ ລາວ. ລາຍລະອຽດຂອງເອກະສານສະບັບນີ້ ໄດ້ກຳນົດໄວ້ໃນ ໝວດທີ 4 ຫາ ໝວດທີ 7 ລຸ່ມນີ້.

### 3.5. ຂໍ້ຕົກລົງ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຄຊກລ, ສະບັບລົງວັນທີ 12 ທັນວາ 2005

## 4. ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ (ຄຊກລ)

ຄຊກລ ແມ່ນສະຖາບັນຂອງລັດຖະບານແຫ່ງ ສປປ ລາວ ສ້າງຕັ້ງຂຶ້ນຕາມດຳລັດ ຂອງ ນາຍົກລັດຖະມົນຕີ ເລກທີ 33/ນຍ ລົງວັນທີ 17 ມີນາ 2004, ມີຄວາມຮັບຜິດຊອບໃນການກຳນົດທິດທາງນະໂຍບາຍກ່ຽວກັບ ການປະຕິ ບັດງານດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ, ບໍລິຫານຄຸ້ມຄອງ ແລະ ປະສານງານກັບທຸກອົງການປະຕິບັດງານ ດ້ານລະເບີດ (ທັງພາຍໃນ ແລະ ຕ່າງປະເທດ) ທີ່ໄດ້ຮັບການຢັ້ງຢືນຮັບຮອງ ໃຫ້ດຳເນີນກິດຈະການດ້ານລະເບີດ ບໍ່ທັນແຕກຢູ່ ສປປ ລາວ.

ພ້ອມນັ້ນ ຄຊກລ ຍັງເຮັດໜ້າທີ່ເປັນຈຸດປະສານງານທາງດ້ານວິຊາການໃນທຸກບັນຫາ ທີ່ພົວພັນກັບສັນຍາ ແລະ ສົນທິສັນສາກົນ, ເຂົ້າຮ່ວມກອງປະຊຸມສາກົນ ແລະ ກອງປະຊຸມຕ່າງໆ ກ່ຽວກັບການປະຕິບັດງານດ້ານລະເບີດ ບໍ່ທັນແຕກ ແລະ ສິ່ງເສດເຫຼືອຈາກລະເບີດບໍ່ທັນແຕກໃນປາງສົງຄາມ (ERW) ຕາມການມອບໝາຍຂອງລັດຖະ ບານແຫ່ງ ສປປ ລາວ.

ຄຊກລ ປະກອບດ້ວຍ 4 ອົງປະກອບ ຄື:

ກ. ອົງປະກອບລະຫວ່າງກະຊວງ, ໂດຍທົ່ວໄປແລ້ວເອີ້ນວ່າ "ກຳມະການ ຄຊກລ".

ຂ. ຫ້ອງການ ຄຊກລ ຂັ້ນສູນກາງ.

ຄ. ຫ້ອງການປະສານງານ ຄຊກລ ປະຈຳແຂວງ.

ງ. ຫ້ອງການປະສານງານຂັ້ນທ້ອງຖິ່ນ (ເມືອງ)

## 5. ຄະນະກຳມະການ ຄຊກລ

ພະນະທ່ານຮອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ທ່ານ ອາຊາງ ລາວລີ ຮອງນາຍົກລັດຖະມົນຕີ ຜູ້ຊີ້ນຳວັດທະນາທຳ-ສັງຄົມ ເປັນຜູ້ຊີ້ນຳ ຄຊກລ.

**5.1. ສະມາຊິກຂອງຄະນະກຳມະການ ຄຊກລ**

ຄະນະກຳມະການ ຄຊກລ ປະກອບດ້ວຍສະມາຊິກ 18 ທ່ານຄື:

ກ. ພະນະທ່ານລັດຖະມົນຕີປະຈຳ ຫລບ, ຄພທສ ເປັນປະທານ ຄຊກລ

ຂ. ພະນະທ່ານລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ ເປັນຮອງປະທານ

ຄ. ພະນະທ່ານລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ

ງ. ຜູ້ຕາງໜ້າ ຫົວໜ້າກົມຊ່າງແສງ, ກະຊວງປ້ອງກັນປະເທດ ເປັນກຳມະການ

ຈ. ຜູ້ຕາງໜ້າ ຫົວໜ້າຈັດຕັ້ງສາກົນ, ກະຊວງການຕ່າງປະເທດ ເປັນກຳມະການ

ສ. ຜູ້ຕາງໜ້າ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເປັນກຳມະການ

ຊ. ຜູ້ຕາງໜ້າ ກະຊວງສາທາລະນະສຸກ ເປັນກຳມະການ

ນ. ຜູ້ຕາງໜ້າ ກະຊວງການແຜນການ ແລະ ການລົງທຶນ

ບ. ຜູ້ຕາງໜ້າ ກະຊວງການການເງິນ ເປັນກຳມະການ

ດ. ຜູ້ຕາງໜ້າ ກະຊວງການໂຍທາທິການ

ຕ. ຜູ້ຕາງໜ້າ ກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ

ຖ. ຜູ້ຕາງໜ້າ ກະຊວງປ້ອງກັນຄວາມສະຫງົບ ເປັນກຳມະການ

ທ. ຜູ້ຕາງໜ້າ ກະຊວງສຶກສາທິການ ເປັນກຳມະການ

ນ. ຕາງໜ້າ ຮອງຫົວໜ້າກົມ, ກະຊວງປ້ອງກັນປະເທດ ເປັນກຳມະການ

ບ. ຜູ້ຕາງໜ້າ ສູນກາງແນວລາວສ້າງຊາດ

ປ. ຜູ້ຕາງໜ້າ ສູນກາງ ຊປປ ລາວ

ຜ. ຜູ້ຕາງໜ້າ ສູນກາງສະຫະພັນແມ່ຍິງລາວ

ຝ. ຜູ້ຕາງໜ້າ ຫົວໜ້າຫ້ອງການ ຄຊກລ

**5.2. ຄວາມຮັບຜິດຊອບຂອງຄະນະກຳມະການ ຄຊກລ**

ຄວາມຮັບຜິດຊອບຂອງຄະນະກຳມະການ ຄຊກລ ມີຄື:

ກ. ສ້າງ, ຈັດຕັ້ງປະຕິບັດ ແລະ ທົບທວນຄືນແຜນຍຸດທະສາດ ຫຼື ແຜນດຳງານອື່ນກ່ຽວກັບວຽກງານແກ້ໄຂບັນຫາ ລບຕ

ຂ. ກຳນົດ ແລະ ສະໜອງທິດທາງນະໂຍບາຍກັບວຽກງານແກ້ໄຂບັນຫາ ລບຕ

ຄ. ຄຸ້ມຄອງພະນັກງານລາວ ແລະ ຕ່າງປະເທດຂອງອົງການປະຕິບັດງານແກ້ໄຂບັນຫາ ລບຕ

ງ. ຮັບຮອງແຜນ ແລະ ງົບປະມານ ແຕ່ລະໄລຍະຂອງ ຄຊກລ ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ ບໍລິຫານ-ຄຸ້ມຄອງຖານຂໍ້ມູນການປະຕິບັດງານດ້ານລະເບີດບໍ່ທັນແຕກ ເຊັ່ນ ຂໍ້ມູນໃນການຈັດບຸລິມະສິດ ແລະ ຂໍ້ມູນຕ່າງໆທີ່ກ່ຽວຂ້ອງກັບການຈັດສັນໜ້າວຽກໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ.

ຈ. ປະສານກັບກະຊວງ, ອົງການຫຼຸບເທົ່າ ແລະ ທ້ອງຖິ່ນ ເພື່ອຈັດລຽງບູລິມະສິດການເກັບກູ້, ການໂຄສະນາ ສຶກສາຄວາມອັນຕະລາຍ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກ ລບຕ.

ສ. ກວດກາ, ຢັ້ງຢືນຄຸນນະພາບ ແລະ ອອກໃບອະນຸຍາດໃຫ້ບັນດາອົງການປະຕິບັດງານການແກ້ໄຂ ບັນຫາ ລບຕ.

ຊ. ເກັບກຳ, ວິເຄາະ, ສ້າງແຜນທີ່ ແລະ ຄຸ້ມຄອງຖານຂໍ້ມູນກ່ຽວກັບວຽກງານການແກ້ໄຂບັນຫາ ລບຕ.

ຍ. ປະສານກັບບັນດາປະເທດຜູ້ໃຫ້ທຶນ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ເພື່ອປຸກລະດົມທຶນ ແລະ ເຕັກນິກວິຊາການ ເຂົ້າໃນວຽກງານແກ້ໄຂບັນຫາ ລບຕ.

ດ. ຄຸ້ມຄອງສູນຝຶກອົບຮົມແຫ່ງຊາດ.

ຕ. ຄົ້ນຄ້ວາທົດລອງເຕັກນິກ, ເຕັກໂນໂລຊີເຂົ້າໃນວຽກງານແກ້ໄຂ ບັນຫາ ລບຕ

ຖ. ປະເມີນພາຍຫຼັງການເກັບກູ້, ການໂຄສະນາຄວາມອັນຕະລາຍ ແລະ ການຊ່ວຍເຫຼືອຜູ້ຫຼອດຊີວິດຈາກ ລບຕຂອງບັນດາອົງການປະຕິບັດງານການແກ້ໄຂບັນຫາ ລບຕ.

ທ. ຄຸ້ມຄອງພາຫານະ, ອຸປະກອນຮັບໃຊ້ຕ່າງໆຂອງ ຄຊກລ ແລະ ຂອງບັນດາອົງການປະຕິບັດງານດ້ານ ການແກ້ໄຂບັນຫາ ລບຕ.

ນ. ສະຫຼຸບສັງລວມ ແລະ ລາຍງານການປະຕິບັດງານການແກ້ໄຂ ບັນຫາ ລບຕ ໃຫ້ລັດຖະບານຢ່າງປົກກະຕິ.

ຄະນະກຳມະການ ຄຊກລ ຍັງມີໜ້າທີ່ອອກຂໍ້ກຳນົດກົດລະບຽບ ສຳລັບກິດຈະການດ້ານລະເບີດບໍ່ທັນແຕກ ແລະ ຊີ້ນຳໃຫ້ທຸກອົງການປະຕິບັດງານດ້ານລະເບີດບໍ່ທັນແຕກປະຕິບັດໃຫ້ສອດຄ່ອງກັບຂໍ້ກຳນົດ ແລະ ລະບຽບການ ຕ່າງໆທີ່ວາງອອກ.

## 5.3. ການປະຊຸມ

ຄະນະກຳມະການ ຄຊກລ ຈະປະຊຸມກັນຢ່າງໜ້ອຍສອງຄັ້ງຕໍ່ປີ ທັງນີ້ແມ່ນອີງຕາມການຕົກລົງຂອງປະທານ, ເພື່ອທົບທວນຄືນ ແລະ ປະກອບຄຳເຫັນໃສ່ບົດລາຍງານ, ວາງແຜນ ແລະ ຮັບຮອງກິດຈະກຳທີ່ຈະປະຕິບັດໃນຕໍ່ໜ້າ. ຄະນະກຳມະການ ຄຊກລ ຍັງຈະມີການປຶກສາຫາລືບັນຫາອື່ນໆທີ່ກ່ຽວຂ້ອງຕາມຄວາມເໝາະສົມ. ປະທານອາດຈະຮຽກປະຊຸມຄະນະເປັນພິເສດໄດ້ຕາມຄວາມຕ້ອງການ ຫຼື ຕາມການສະເໜີຂອງສະມາຊິກ ຫຼື ຜູ້ໃຫ້ທຶນ.

ອົງປະຊຸມຂອງຄະນະກຳມະການ ຄຊກລ ຢ່າງໜ້ອຍແມ່ນມີສະມາຊິກ 5 ທ່ານ, ບວກກັບປະທານ ຫຼື ຮອງປະທານ 1 ທ່ານ. ອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ບັນດາຜູ້ໃຫ້ທຶນ ກໍຈະໄດ້ຮັບເຊີນໃຫ້ເຂົ້າຮ່ວມກອງປະຊຸມຄະນະກຳມະການ ຄຊກລ ໃນຖານະຜູ້ສັງເກດການ.

ການຕັດສິນບັນຫາຂອງຄະນະກຳມະການ ຄຊກລ ແມ່ນອີງໃສ່ບົນພື້ນຖານສຽງສ່ວນຫຼາຍຂອງສະມາຊິກທີ່ເຂົ້າຮ່ວມ ກອງປະຊຸມ. ໃນກໍລະນີຄະແນນສຽງຂອງສະມາຊິກມີຈຳນວນເທົ່າກັນ ສຽງຂອງປະທານມີຄຸນຄ່າເປັນອັນຕັດສິນ. ເນື້ອໃນ ແລະ ຂໍ້ຕົກລົງຂອງກອງປະຊຸມ ຈະຕ້ອງມີການບັນທຶກໄວ້ຢ່າງລະອຽດ.

ຄຊກລ ອາດຈະເປັນຜູ້ຕ່າງໜ້າໃຫ້ລັດຖະບານແຫ່ງ ສປປ ລາວ ເຂົ້າຮ່ວມກອງປະຊຸມສາກົນ ທີ່ພົວພັນກັບການປະຕິບັດງານດ້ານລະເບີດບໍ່ທັນແຕກ ຫຼື ບັນຫາສິ່ງເສດເຫຼືອຈາກລະເບີດແຕ່ປາງສົງຄາມຕາມການອະນຸມັດຂອງສຳນັກງານນາຍົກລັດຖະມົນຕີ ແລະ ກະຊວງການຕ່າງປະເທດ.

## 5.4. ການອະນຸມັດອົງການປະຕິບັດງານ ແລະ ກິດຈະກຳ ກ່ຽວກັບລະເບີດບໍ່ທັນແຕກ

ຄະນະກຳມະການ ຄຊກລ ຈະປະຕິບັດໜ້າທີ່ໃນຖານະເປັນຕົວແທນຂອງລັດຖະບານແຫ່ງ ສປປ ລາວ ໃນສັນຍາ ຫຼື ຂໍ້ຕົກລົງໃດໜຶ່ງ ທີ່ພົວພັນກັບກິດຈະການດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ. ຂະບວນການໃນການຂໍອະນຸມັດສັນຍາ ຈະຕ້ອງປະຕິບັດຕາມລະບຽບການຂອງລັດຖະບານແຫ່ງ ສປປ ລາວ. ທຸກກິດຈະກຳການປະຕິບັດງານດ້ານລະເບີດບໍ່ທັນແຕກ ທີ່ໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ຈະຕ້ອງໄດ້ເຮັດບົດ ບັນທຶກຄວາມເຂົ້າໃຈ (MOU) ນຳກັນລະຫວ່າງຄະນະກຳມະການ ຄຊກລ ແລະ ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກທີ່ກ່ຽວຂ້ອງ.

ທຸກເອກະສານທີ່ພົວພັນກັບຂໍ້ຕົກລົງການໃຫ້ທຶນ ລະຫວ່າງຜູ້ໃຫ້ທຶນກັບອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຈະຖືກເກັບຮັກສາໄວ້ນຳ ຄຊກລ.

ເພື່ອປະຕິບັດໃຫ້ບັນລຸຕາມແຜນຍຸດທະສາດແຫ່ງຊາດ ແມ່ນມີຄວາມຈຳເປັນຕ້ອງໄດ້ເປີດກວ້າງໃຫ້ພາກສ່ວນເກັບກູ້ລະເບີດແບບໄລ່ລຽງທຸລະກິດໄດ້ມີສ່ວນຮ່ວມໃນການປະກອບສ່ວນໃນຂົງເຂດກິດຈະການດ້ານລະເບີດບໍ່ທັນແຕກ, ຄະນະກຳມະການ ຄຊກລ ແມ່ນເປັນຜູ້ໃຫ້ການອະນຸມັດທາງດ້ານວິຊາການຢ່າງເປັນທາງການໃຫ້ແກ່ບໍລິສັດເກັບກູ້ລະເບີດບໍ່ທັນແຕກແບບໄລ່ລຽງທຸລະກິດ ທີ່ປະສົງຢາກຈະປະຕິບັດງານເກັບກູ້ລະເບີດຢູ່ ສປປ ລາວ.

ສຳລັບບໍລິສັດທຸລະກິດລົງທຶນພາຍໃນ ຫຼື ຕ່າງປະເທດ ທີ່ມີຄວາມຕັ້ງໃຈຈະດຳເນີນການເກັບກູ້ລະເບີດບໍ່ທັນແຕກໃນຖານະທີ່ເປັນສ່ວນໜຶ່ງຂອງທຸລະກິດຂອງຕົນ ກໍ່ຕ້ອງໄດ້ຮັບອະນຸມັດຈາກ ຄະນະກຳມະການ ຄຊກລ ເຊັ່ນກັນ.

## 5.5. ການບໍລິຫານຄຸ້ມຄອງຊັບສິນຕ່າງໆ

ຄະນະກຳມະການ ຄຊກລ ຈະເປັນຜູ້ຄຸ້ມຄອງຊັບສິນທັງໝົດ ທີ່ຜູ້ໃຫ້ທຶນໂອນ ຫຼື ມອບໃຫ້ລັດຖະບານແຫ່ງ ສປປ ລາວ ບໍ່ວ່າຈະເປັນວັດຖຸສຳລັບຮັບໃຊ້ວຽກງານເກັບກູ້ລະເບີດ ຫຼື ດ້ານການເງິນ. ການບໍລິຫານຄຸ້ມຄອງຊັບສິນເຫຼົ່ານີ້ ຈະຕ້ອງປະຕິບັດໃຫ້ສອດຄ່ອງກັບເນື້ອໃນຂອງ ບົດບັນທຶກຄວາມເຂົ້າໃຈ ຫຼື ຂໍ້ຕົກລົງທາງການ ທີ່ໄດ້ເຊັນຮ່ວມກັນ ລະຫວ່າງຜູ້ໃຫ້ທຶນກັບລັດຖະບານແຫ່ງ ສປປ ລາວ.

ໃນກໍລະນີທີ່ບໍ່ມີບົດບັນທຶກຄວາມເຂົ້າໃຈ ຫຼື ຂໍ້ຕົກລົງທາງການ ທີ່ເຊັນກັນຮ່ວມລະຫວ່າງຜູ້ໃຫ້ທຶນກັບລັດຖະບານແຫ່ງ ສປປ ລາວ ຫຼື ບໍ່ມີມາດຕາໃດຂອງບົດບັນທຶກຄວາມເຂົ້າໃຈ ຫຼື ຂໍ້ຕົກລົງ ທີ່ກຳນົດກ່ຽວກັບເງື່ອນໄຂໃນການຊຳລະສະສາງຊັບສິນໃນເວລາສິ້ນສຸດໂຄງການ ຕໍ່ບັນຫາດັ່ງກ່າວ ຜູ້ຕາງໜ້າລັດຖະບານແຫ່ງ ສປປ ລາວ ແລະ ຜູ້ໃຫ້ທຶນ ຈະຕ້ອງເຈລະຈາ ແລະ ຕົກລົງນຳກັນຕາມວິທີທາງທີ່ເໝາະສົມ.

## 6. ຫ້ອງການ ຄຊກລ ຂັ້ນສູນກາງ

ຫ້ອງການ ຄຊກລ ຂັ້ນສູນກາງ ມີອຳນວຍການໜຶ່ງທ່ານ, ຮອງອຳນວຍການ 2 ທ່ານ ແລະ ມີ 2 ພະແນກການຫຼັກຄື: ພະແນກປະຕິບັດງານ ແລະ ພະແນກນະໂຍບາຍ, ບໍລິຫານ ແລະ ມາດຕະຖານ, ຊຶ່ງແຕ່ລະພະແນກມີຫົວໜ້າພະແນກ. ຫ້ອງການ ຄຊກລ ຂັ້ນສູນກາງ ປະກອບດ້ວຍພະນັກງານບໍລິຫານຄຸ້ມຄອງ ແລະ ພະນັກງານວິຊາການຄົນ ລາວ ແລະ ທີ່ປຶກສາຕ່າງປະເທດຈຳນວນໜຶ່ງຕາມຄວາມຕ້ອງການ ສຳລັບດຳເນີນວຽກງານຂອງຫ້ອງການ ຄຊກລ.

ພະແນກປະຕິບັດງານແບ່ງອອກເປັນສີ່ໜ່ວຍງານ ຄື: ໜ່ວຍງານເກັບກູ້ລະເບີດບໍ່ທັນແຕກ, ໜ່ວຍງານສຶກສາຄວາມສ່ຽງໄພຈາກ ລບຕ (MRE), ໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກລະເບີດ (VA) ແລະ ໜ່ວຍງານຄຸ້ມຄອງຂໍ້ມູນຂ່າວສານ (IM). ແຕ່ລະໜ່ວຍງານດັ່ງກ່າວມີໜ້າທີ່ຮັບຜິດຊອບໃນການບໍລິຫານຄຸ້ມຄອງວຽກຢູ່ໃນຂະແໜງການທີ່ຕົນຮັບຜິດຊອບ ລວມທັງການຈັດກອງປະຊຸມດ້ານວິຊາການ (TWG) ຕາມວາລະປົກກະຕິທີ່ຈັດຂຶ້ນໂດຍຫ້ອງການ ຄຊກລ.

ໂຄງຮ່າງການຈັດຕັ້ງ ຂອງ ຫ້ອງການ ຄຊກລ ຂັ້ນສູນກາງ ມີຢູ່ໃນ **ເອກກະສານຊ້ອນທ້າຍ ກ.**

## 6.1. ຄວາມຮັບຜິດຊອບລວມ ຂອງ ຫ້ອງການ ຄຊກລ ຂັ້ນສູນກາງ

ຄວາມຮັບຜິດຊອບລວມຂອງຫ້ອງການ ຄຊກລ ຂັ້ນສູນກາງ ກໍານົດໄວ້ຂ້າງລຸ່ມນີ້. ນອກຈາກນັ້ນ ຄວາມຮັບຜິດຊອບ ຂອງຫ້ອງການ ຄຊກລ ຂັ້ນສູນກາງ, ພະແນກ ແລະ ໜ່ວຍງານຕ່າງໆ ຍັງກໍານົດຢູ່ໃນບົດຕ່າງໆ ຂອງມາດຕະຖານແຫ່ງຊາດສະບັບນີ້ນໍາ. ຄວາມຮັບຜິດຊອບລວມມີຄື:

ກ. ປະຕິບັດໜ້າທີ່ເປັນເສນາທິການໃຫ້ ຄະນະກໍາມະການ ຄຊກລ ໃນທຸກບັນຫາທີ່ພົວພັນກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ.

ຂ. ມີຄໍາເຫັນໃຫ້ ຄະນະກໍາມະການ ຄຊກລ ກ່ຽວກັບນະໂຍບາຍ, ແຜນຍຸດທະສາດ, ງົບປະມານ ແລະ ແຜນປະຕິບັດ ງານ ທີ່ກ່ຽວຂ້ອງກັບການປະຕິບັດງານດ້ານລະເບີດບໍ່ທັນແຕກ ເພື່ອມີຄໍາເຫັນປັບປຸງແກ້ໄຂ ແລະ ຮັບຮອງ ຫຼື ປະກາດໃຊ້ຢ່າງເປັນທາງການ.

ຄ. ກໍານົດ, ປັບປຸງ ຫຼື ດັດແປງການຈັດຕັ້ງຂອງຫ້ອງການ ຄຊກລ ຂັ້ນສູນກາງ ເພື່ອ ໃຫ້ສອດ ຄ່ອງກັບຄວາມຕ້ອງການ ແລະ ຄວາມຈໍາເປັນ ໃນການບໍລິຫານຄຸ້ມຄອງວຽກງານດ້ານລະເບີດບໍ່ທັນແຕກ ໂດຍຜ່ານການປຶກສາຫາລືກັບ ຄະນະກໍາມະການ ຄຊກລ.

ງ. ຄຸ້ມຄອງ, ບໍລິຫານ ແລະ ຂຶ້ນບັນຊີຊັບສິນທັງໝົດຂອງ ຄຊກລ.

ຈ. ເກັບກໍາ, ປົກປັກຮັກສາ, ວິໄຈ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ທີ່ພົວພັນກັບການປະຕິບັດງານດ້ານລະເບີດບໍ່ທັນແຕກ.

ສ. ຕາງໜ້າໃຫ້ ຄະນະກໍາມະການ ຄຊກລ ໃນການປະສານງານກັບບັນດາອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ, ອໍານາດການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມງານທີ່ປະຕິບັດງານດ້ານລະເບີດບໍ່ທັນແຕກ ເພື່ອເຮັດໃຫ້ການບໍລິຫານຄຸມຄອງ ກິດຈະການດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ ມີປະສິດທິຜົນ ແລະ ປະສິດທິພາບ. ຄວາມຮັບຜິດຊອບດັ່ງກ່າວລວມມີ ອອກລະບຽບການທີ່ເໝາະສົມ, ກໍານົດ ຫຼື ແກ້ໄຂບັນຫາທາງດ້ານວິຊາການ, ເຜີຍແຜ່ຂໍ້ມູນຜົນກະທົບຂອງລະເບີດບໍ່ທັນແຕກທີ່ມີຕໍ່ ສປປ ລາວ, ພັດທະນາແຜນຍຸດທະສາດ ແລະ ລະບຽບການຕ່າງໆ ໃນການແກ້ໄຂບັນຫາລະເບີດບໍ່ທັນແຕກ.

ຊ. ຕິດຕາມ, ກວດກາ, ສົ່ງເສີມ ແລະ ສະໜັບສະໜູນ ການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ສໍາລັບຂະແໜງກິດຈະການດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ, ພ້ອມທັງ ຂໍ້ກໍານົດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

ນ. ຕິດຕາມກວດກາກິດຈະກໍາຂອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ແລະ ຂອດການພົວພັນປະສານງານຢູ່ພາຍໃນຂັ້ນແຂວງ ລວມເຖິງການປະສານງານກັບຂະແໜງການກ່ຽວຂ້ອງອື່ນໆ.

ຕ. ບໍລິຫານຄຸ້ມຄອງດ້ານການເງິນພາຍໃນ ຄຊກລ ໃຫ້ສອດຄ່ອງກັບງົບປະມານທີ່ໄດ້ຮັບອະນຸມັດຈາກຄະນະກຳມະການ ຄຊກລ. ຫ້ອງການ ຄຊກລ ຂັ້ນສູນກາງ ມີຄວາມຮັບຜິດຊອບເຮັດໃຫ້ການບໍລິຫານຄຸ້ມຄອງ ດ້ານການເງິນມີຄວາມໂປ່ງໃສ ແລະ ສອດຄ່ອງກັບກົດໝາຍ ຂອງ ສປປ ລາວ.

### 6.2. ຄວາມຮັບຜິດຊອບຂອງພະແນກນະໂຍບາຍ, ບໍລິຫານ ແລະ ມາດຕະຖານ

ຄວາມຮັບຜິດຊອບຂອງພະແນກນະໂຍບາຍ, ບໍລິຫານ ແລະ ມາດຕະຖານ ກຳນົດຢູ່ຂ້າງລຸ່ມນີ້. ສ່ວນຄວາມຮັບຜິດຊອບເພີ່ມຕື່ມຂອງພະແນກນີ້ ຍັງໄດ້ກຳນົດຢູ່ໃນບົດຕ່າງໆຂອງມາດຕະຖານແຫ່ງຊາດນຳ. ຄວາມຮັບຜິດຊອບຂອງພະແນກດັ່ງກ່າວມີຄື:

ກ. ບໍລິຫານວຽກພາຍໃນຫ້ອງການ ຄຊກລ (ບຸກຄະລາກອນ, ການເງິນ, ສະໜອງ-ຈັດຊື້ ແລະ ອື່ນໆ).

ຂ. ເປັນເສນາທິການໃຫ້ ຄະນະກຳມະການ ຄຊກລ.

ຄ. ຮັບຜິດຊອບວຽກງານປະຊາສຳພັນ.

ງ. ໜ່ວຍງານແຜນການ ສະໜັບສະໜູນ ແລະ ປະສານງານ ໃນການລາຍງານຕໍ່ພາຍນອກ ທັງພາຍໃນ ແລະ ສາກົນ, ກະກຽມບົດສະເໜີໂຄງການ ແລະ ປະສານງານໃນການລະດົມທຶນ.

ຈ. ບໍລິຫານຄຸ້ມຄອງຄຸນນະພາບ (QM) ໃນທຸກກິດຈະກຳເກັບກູ້ລະເບີດບໍ່ທັນແຕກ, ຊຶ່ງລວມມີ:

(1) ພັດທະນາ ແລະ ຄຸ້ມຄອງ ມາດຕະຖານແຫ່ງຊາດ.

(2) ອອກໜັງສືຢັ້ງຢືນຮັບຮອງ ໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ.

(3) ຈັດຕັ້ງປະຕິບັດການກວດກາຄຸນນະພາບພາຍນອກ.

### 6.3. ຄວາມຮັບຜິດຊອບຂອງພະແນກປະຕິບັດງານ

ຄວາມຮັບຜິດຊອບຂອງພະແນກປະຕິບັດງານນອກຈາກທີ່ໄດ້ລະບຸຢູ່ຂ້າງລຸ່ມນີ້ ຍັງມີຄວາມຮັບຜິດຊອບເພີ່ມຕື່ມອື່ນໆຂອງພະແນກປະຕິບັດງານ ຍັງໄດ້ກຳນົດຢູ່ໃນບົດຕ່າງໆຂອງມາດຕະຖານແຫ່ງຊາດນຳ. ຄວາມຮັບຜິດຊອບຂອງພະແນກດັ່ງກ່າວລວມມີ:

ກ. ຈັດບຸລິມະສິດວຽກ ໃຫ້ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ.

ຂ. ປະສານງານບັນດາກິດຈະກຳກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກ ໂດຍຜ່ານຂະແໜງກຸ່ມປະຕິບັດງານດ້ານວິຊາການ.

ຄ. ປະຕິບັດການປະເມີນຜົນພາຍຫຼັງການເກັບກູ້ລະເບີດ.

ງ. ປະຕິບັດໃຫ້ສອດຄ່ອງກັບ ມາດຕະຖານການປະຕິບັດງານດ້ານລະເບີດຝັງດິນສາກົນ, ມາດຕະຖານແຫ່ງຊາດ ແລະ ບົດຮຽນການປະຕິບັດງານທີ່ດີຂອງສາກົນ.

ຈ. ກະກຽມແຜນດຳເນີນງານປະຈຳປີຂອງຂະແໜງປະຕິບັດງານດ້ານລະເບີດບໍ່ທັນແຕກ, ຕິດຕາມຊີ້ນຳການປະຕິບັດແຜນດຳເນີນງານ ແລະ ຜົນສຳເລັດຕາມຈຸດປະສົງທີ່ກຳນົດໄວ້.

ສ. ບໍລິຫານຄຸ້ມຄອງຖານຂໍ້ມູນແຫ່ງຊາດ ສຳລັບກິດຈະການເກັບກູ້ລະເບີດບໍ່ທັນແຕກ, ວິໄຈຂໍ້ມູນຂອງຖານຂໍ້ມູນ ແລະ ເຜີຍແຜ່ຂໍ້ມູນກ່ຽວຂ້ອງໃຫ້ອົງການທີ່ປະຕິບັດງານດ້ານລະເບີດບໍ່ທັນແຕກ ແລະ ຂະແໜງ

ການກ່ຽວຂ້ອງອື່ນໆ (ທັງພາຍໃນ ແລະ ຕ່າງປະເທດ) ຕາມຄວາມເໝາະສົມ. ຖານຂໍ້ມູນດັ່ງກ່າວ ຈະໄດ້ໃຊ້ເປັນບ່ອນອີງໃນການຈັດບຸລິມະສິດ ແລະ ວາງແຜນ ສຳລັບການປະຕິບັດງານດ້ານລະເບີດທັນແຕກ.

## 7. ຫ້ອງການປະສານງານ ຄຊກລ ປະຈຳແຂວງ

ຫ້ອງການ ຄຊກລ ມີຄວາມຮັບຜິດຊອບຮັບປະກັນໃຫ້ ກິດຈະກຳກ່ຽວກັບວຽກງານເກັບກູ້ລະເບີດຢູ່ໃນແຂວງມີການປະສານງານກັນຢ່າງເໝາະສົມ. ຖ້າມີເງື່ອນໄຂປະຕິບັດໄດ້ ຄວາມຮັບຜິດຊອບເຫຼົ່ານີ້ ຈະຖືກປະຕິບັດໂດຍອີງການຈັດຕັ້ງຂອງແຂວງ ຫຼື ບໍ່ດັ່ງນັ້ນ ຄຊກລ ອາດຈະຕ້ອງສ້າງສາຂາຢູ່ຂັ້ນແຂວງ ຫຼື ຮັບສະໝັກພະນັກງານເພີ່ມເພື່ອປະກອບໃຫ້ຫ້ອງການຂອງລັດທີ່ຮັບຜິດຊອບວຽກນີ້ຢູ່ແລ້ວໃນແຂວງ.

ຫ້ອງການປະສານງານ ຄຊກລ ປະຈຳແຂວງ ຈະເຮັດໜ້າທີ່ເປັນຜູ້ຕາງໜ້າໃຫ້ຫ້ອງການ ຄຊກລ ຂັ້ນສູນກາງ. ຫ້ອງການດັ່ງກ່າວ ປະຕິບັດວຽກດ້ານວິຊາການພາຍໃຕ້ການຊີ້ນຳຂອງ ຫ້ອງການ ຄຊກລ ຂັ້ນສູນກາງ, ແຕ່ໃນດ້ານການບໍລິຫານແມ່ນ ຢູ່ພາຍໃຕ້ການຊີ້ນຳຂອງແຂວງກ່ຽວຂ້ອງ. ຫ້ອງການປະສານງານ ຄຊກລ ປະຈຳແຂວງ ຈະລາຍງານບັນຫາດ້ານວິຊາການໃຫ້ຫ້ອງການ ຄຊກລ ສູນກາງໂດຍກົງ ໂດຍຜ່ານການຮັບຮູ້ ຈາກອຳນາດການປົກຄອງແຂວງທີ່ກ່ຽວຂ້ອງ.

ຄວາມຮັບຜິດຊອບຂອງຫ້ອງການປະສານງານ ຄຊກລ ປະຈຳແຂວງ ກຳນົດຢູ່ລຸ່ມນີ້. ລາຍລະອຽດຄວາມຮັບຜິດຊອບອື່ນໆ ໄດ້ກຳນົດຢູ່ໃນບົດຕ່າງໆຂອງມາດຕະຖານແຫ່ງຊາດສະບັບນີ້. ຄວາມຮັບຜິດຊອບຂອງຫ້ອງການປະສານງານ ຄຊກລ ປະຈຳແຂວງ ລວມມີ:

ກ. ເກັບກຳຂໍ້ມູນ, ປົກປັກຮັກສາ, ວິໄຈ ແລະ ເຜີຍແຜ່ຂໍ້ມູນທີ່ພົວພັນກັບການປະຕິບັດງານດ້ານລະເບີດບໍ່ທັນແຕກ ຢູ່ຂັ້ນແຂວງ.

ຂ. ຕິດຕາມ, ກວດກາ, ສົ່ງເສີມ ແລະ ສະໜັບສະໜູນ ການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດ ສຳລັບຂະແໜງກິດຈະການດ້ານລະເບີດບໍ່ທັນແຕກຢູ່ ສປປ ລາວ, ພ້ອມທັງ ຂໍ້ກຳນົດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ.

ຄ. ປະສານສົມທົບກັບອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ, ອຳນາດການປົກຄອງທ້ອງຖິ່ນ ແລະ ຄູ່ຮ່ວມປະຕິບັດງານດ້ານລະເບີດໃນຂັ້ນແຂວງ ເພື່ອອຳນວຍຄວາມສະດວກໃຫ້ການການປະຕິບັດງານດ້ານລະເບີດໃນແຂວງກ່ຽວຂ້ອງໃຫ້ມີປະສິດທິຜົນ ແລະ ປະສິດທິພາບ, ລວມທັງໂຄສະນາກ່ຽວກັບຜົນກະທົບຂອງລະເບີດບໍ່ທັນແຕກທີ່ມີຕໍ່ ສປປ ລາວ ແລະ ພັດທະນາລະບຽບການຕ່າງໆ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ.

ງ. ປະສານງານກັບອຳນາດການປົກຄອງແຂວງ ແລະ ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ໃນການເກັບກຳຂໍ້ມູນທີ່ກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກ, ຈັດບຸລິມະສິດ ແລະ ວາງແຜນວຽກໃນຂັ້ນແຂວງ, ນຳສະເໜີແຜນດຳເນີນງານ ແລະ ລາຍງານເປັນແຕ່ລະໄລຍະໃຫ້ຫ້ອງການ ຄຊກລ ຂັ້ນສູນກາງ. ການປະສານງານນີ້ ລວມທັງການຮັບປະກັນໃຫ້ການປະຕິບັດງານດ້ານລະເບີດບໍ່ທັນແຕກສອດຄ່ອງກັບບຸລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຂອງແຂວງກ່ຽວຂ້ອງ.

## 8. ຫ້ອງການປະງານ ຄຊກລ ຂັ້ນທ້ອງຖິ່ນ (ແຂວງ ແລະ ເມືອງ

ຫ້ອງການປະສານງານຂັ້ນທ້ອງຖິ່ນ ເມືອງ, ແຂວງຂັ້ນ ສ້າງຕັ້ງຂຶ້ນຄືກັນກັບຫ້ອງການປະສານງານ ຂັ້ນແຂວງ, ລະດັບໜ້າທີ່ຄວາມຮັບຜິດຊອບຂັ້ນເມືອງແຕກຕ່າງຈາກຂັ້ນແຂວງຄື:

ກ. ເປັນເສນາທິການຊ່ວຍວຽກໃຫ້ແກ່ ຄຊກລ ຂັ້ນສູນກາງ ແລະ ອຳນາດການປົກຄອງທ້ອງຖິ່ນໃນທຸກບັນຫາ ທີ່ກ່ຽວຂ້ອງກັບວຽກງານການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ທ້ອງຖິ່ນຕົນ.

ຂ. ສົມທົບກັບອຳນາດການປົກຄອງ ແລະ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນກ່ຽວກັບ ລບຕ ທີ່ຕົກຄ້າງ ແລະ ຈັດລຽງບູລິມະສິດແກ້ໄຂບັນຫາ ລບຕ ຢູ່ທ້ອງຖິ່ນຕົນ.

ຄ. ປະສານກັບອົງການປະຕິບັດງານ ແລະ ບໍລິສັດເກັບກູ້ລະເບີດ ເພື່ອຕິດຕາມ , ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານການແກ້ໄຂບັນຫາ ລບຕ ທີ່ຕົກຄ້າງຢູ່ທ້ອງຖິ່ນຕົນ.

ງ. ຕາງໜ້າໃຫ້ ຄຊກລ ຄຸ້ມຄອງພະນັກງານ-ລັດຖະກອນລາວ ແລະ ຕ່າງປະເທດ ທີ່ປະຕິບັດໜ້າທີ່ແກ້ໄຂບັນຫາ ລບຕ ຢູ່ທ້ອງຖິ່ນຕົນ.

ຈ. ສະຫຼຸບລາຍງານ ກ່ຽວກັບຄວາມຄືບໜ້າ ແລະ ຜົນໄດ້ຮັບຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢູ່ທ້ອງຖິ່ນໃຫ້ແກ່ ຄຊກລ ເປັນແຕ່ລະໄລຍະຢ່າງເປັນປົກກະຕິ.

ສ. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍ.

## 9. ຄວາມຮັບຜິດຊອບລວມຂອງອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ

ອົງການປະຕິບັດງານດ້ານລະເບີດບໍ່ທັນແຕກ ທີ່ປະຕິບັດງານຢູ່ໃນ ສປປ ລາວ ຈະຕ້ອງ:

ກ. ກ່ອນຈະເລີ່ມຈັດຕັ້ງປະຕິບັດວຽກງານດ້ານລະເບີດບໍ່ທັນແຕກໃນ ສປປ ລາວ, ຈະຕ້ອງໄດ້ຮັບໜັງສືຢັ້ງຢືນຮັບຮອງຈາກ ຄຊກລ ກ່ອນ ຈຶ່ງສາມາດຈັດຕັ້ງປະຕິບັດໄດ້.

ຂ. ທຸກການປະຕິບັດງານດ້ານລະເບີດບໍ່ທັນແຕກ ຕ້ອງປະຕິບັດໃຫ້ສອດຄ່ອງກັບຂໍ້ກຳນົດທີ່ລະບຸໄວ້ໃນ ມາດຕະຖານແຫ່ງຊາດ.

ຄ. ສະໜອງແຜນດຳເນີນງານ ແລະ ບົດລາຍງານຕ່າງໆ ໃຫ້ ຄຊກລ ຕາມທີ່ກຳນົດໃນມາດຕະຖານແຫ່ງຊາດ.

ງ. ເຂົ້າຮ່ວມກອງປະຊຸມໃນຂະແໜງປະຕິບັດງານດ້ານລະເບີດບໍ່ທັນແຕກຂອງ ຄຊກລ ແລະ ອະນຸຂະແໜງການກ່ຽວຂ້ອງ ແລະ ເຂົ້າຮ່ວມກອງປະຊຸມກຸ່ມວິຊາການຕາມຄວາມຮຽກຮ້ອງຕ້ອງການ.

# ເອກກະສານຊ້ອນທ້າຍ ກໍ ໂຄງຮ່າງການຈັດຕັ້ງຂອງຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂບັນຫາລະເບີດບໍ່ທັນແຕກຕົກຄ້າງ

* <u>ຄຊກລ ປະກອບດ້ວຍ:</u>

- ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ
- ກະຊວງ ແຜນການ ແລະ ການລົງທຶນ
- ກະຊວງ ກະສິກຳ ແລະ ປ່າໄມ້
- ກະຊວງ ປ້ອງກັນປະເທດ
- ກະຊວງ ສຶກສາທິການ ແລະ ກິລາ
- ກະຊວງ ການຕ່າງປະເທດ
- ກະຊວງ ສາທາລະນະສຸກ
- ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
- ກະຊວງ ປ້ອງກັນຄວາມສະຫງົບ
- ກະຊວງການເງິນ
- ກະຊວງໂຍທາທິການ ແລະ ຂົນສົ່ງ
- ສູນກາງແນວລາວສ້າງຊາດ
- ສູນກາງສະຫະພັນແມ່ຍິງລາວ
- ຫ້ອງການ ຄຊກລ

